**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

\-------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 229 /ນຍ

ນະຄອນຫລວງວຽງຈັນ, ວັນທີ 9-08-2005

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11/10/1996;
- ອີງຕາມເອກະສານສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ0163/ກປ.05, ລົງວັນທີ 8/7/2005.

## ນາຍົກລັດຖະມົນຕີ ອອກດຳລັດ:

<u>ມາດຕາ 1</u>: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ ສະບັບເດືອນກໍລະກົດ ປີ 2005 ຢ່າງເປັນທາງການ.

<u>ມາດຕາ 2</u>: ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ ໃຫ້ປະກົດຜົນເປັນຈິງ.

<u>ມາດຕາ 3</u>: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

<u>ມາດຕາ 4</u>: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ